ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 001 ປປທ

ລົງວັນທີ 28-12-2010.

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍການກຳນົດອັດຕາອາກອນກຳໄລ

ແລະ ຄ່າທຳນຽມສຳລັບການດຳເນີນທຸລະກິດໃນຕະຫຼາດຫຼັກຊັບ.

------------------

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ 19 ພຶດສະພາ 2005;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 73/ຄປຈ, ລົງວັນທີ 13 ທັນວາ 2009.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :

ມາດຕາ 1 : ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຈະໄດ້ຮັບນະໂຍບາຍອາກອນກຳໄລຫຼຸດ 5% ຈາກອັດຕາປົກກະຕິ ເປັນໄລຍະເວລາ 04 ປີ ນັບຕັ້ງແຕ່ວັນຈົດທະບຽນໃນຕະຫຼາດຫຼັກຊັບເປັນຕົ້ນໄປ.

ມາດຕາ 2 : ບຸກຄົນ ແລະ ນິຕິບຸກຄົນທີ່ດຳເນີນການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບ ຕ້ອງເສຍຄ່າທຳນຽມອັດຕາ 0,3% ຂອງມູນຄ່າຮຸ້ນທີ່ຂາຍໃນແຕ່ລະຄັ້ງ.

ມາດຕາ 3 : ການຈົດທະບຽນສັນຍາຂອງບໍລິສັດຜະລິດໄຟຟ້າລາວມະຫາຊົນ ຕ້ອງເສຍຄ່າທຳນຽມຈຳນວນ 200.000 ກີບ ( ສອງຮ້ອຍພັນກີບ ) ຕໍ່ ໜຶ່ງສະບັບ.

ມາດຕາ 4 : ລັດຖະບັນຍັດສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຫ້ອງວ່າການສະພາແຫ່ງຊາດ
ກົມເສດຖະກິດແຜນການແລະການເງິນ
ຂາເຂົ້າ ເລກທີ: 815
ວັນທີ: 23.11.2010

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນາຍົກລັດຖະມົນຕີ**

ເລກທີ 168 \ນຍ

ນະຄອນຫລວງວຽງຈັນ, ວັນທີ 22.11.2010

ສະພາແຫ່ງຊາດ
ຂາເຂົ້າ
ເລກທີ 1724
ລົງວັນທີ 22/11/2010

## ໜັງສືສະເໜີ

ຮຽນ: ທ່ານ ປະທານສະພາແຫ່ງຊາດ ທີ່ນັບຖື

ເລື່ອງ: ຂໍການຮັບຮອງແລະ ຍົກເວັ້ນ ບາງບັນຫາ ໃນການປະຕິບັດ ບາງມາດຕາ ຂອງກົດໝາຍບາງສະບັບ ທີ່ຕິດພັນກັບວຽກງານຫລັກຊັບ ແລະ ຕະຫລາດຫລັກຊັບ .

- ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງໃໝ່
- ອີງກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມໜັງສືສະເໜີ ສະບັບເລກທີ 015 / ຄລຕ , ລົງວັນທີ 19/11/2010 ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

ຂ້າພະເຈົ້າ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານປະທານສະພາແຫ່ງຊາດຊາບວ່າ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຂອງຕະຫລາດຫລັກຊັບລາວສາມາດຈັດຕັ້ງປະຕິບັດໃນວັນທີ 11 ມັງກອນ 2011, ລັດຖະບານຈຶ່ງມີຄວາມຈຳເປັນສະເໜີມາຍັງທ່ານ ເພື່ອພິຈາລະນາບາງບັນຫາ ດັ່ງລຸ່ມນີ້:

I. ບັນຫາລວມທີ່ຕິດພັນກັບການອອກ ແລະ ສະເໜີຂາຍຮຸ້ນ ຕໍ່ມວນຊົນ ແລະ ການຈົດທະບຽນໃນຕະຫລາດຫລັກຊັບລາວ:

1. ຂໍຍົກເວັ້ນການປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ມາດຕາ 101, 107, 111, 115, 184 ແລະ 185 ທີ່ຕິດພັນກັບການອອກໃບຮຸ້ນ ແລະ ການໂອນຮຸ້ນຂອງ ບໍລິສັດມະຫາຊົນທີ່ຈົດທະບຽນໃນຕະຫລາດຫລັກຊັບ ຍ້ອນວ່າບໍລິສັດມະຫາຊົນບໍ່ສາມາດຈັດຕັ້ງປະຕິບັດມາດຕາດັ່ງກ່າວໄດ້ຄືກັນກັບບໍລິສັດຈຳກັດ.

2. ຂໍຫລຸດອາກອນກຳໄລສຳລັບບໍລິສັດຈົດທະບຽນໃນຕະຫລາດຫລັກຊັບລົງ 5% ຈາກອັດຕາປົກກະຕິ ເປັນໄລຍະເວລາ 4 ປີ ຈຸດປະສົງເພື່ອສົ່ງເສີມການພັດທະນາຕະຫລາດຫລັກຊັບ ແຕ່ຍັງຮັບປະກັນການປະຕິບັດລາຍຮັບງົບປະມານເປັນປົກກະຕິ.

3. ສະເໜີຍົກເວັ້ນອາກອນກຳໄລຈາກການຂາຍຮຸ້ນສະເພາະໃນຕະຫລາດຫລັກຊັບ ຍ້ອນວ່າໃນທາງປະຕິບັດບໍ່ສາມາດຈັດຕັ້ງປະຕິບັດໄດ້ ແຕ່ເພື່ອຮັບປະກັນການເກັບລາຍຮັບງົບປະມານ ຈຶ່ງສະເໜີເກັບຄ່າທຳນຽມຈາກການຂາຍຮຸ້ນ 0,2% ສຳລັບບຸກຄົນ ແລະ 0,5% ສຳລັບນິຕິບຸກຄົນ.

II. ບັນຫາສະເພາະ ທີ່ຕິດພັນກັບລັດວິສາຫະກິດ ໄຟຟ້າລາວ ແລະ ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ ທີ່ຈະຈົດທະບຽນ ໃນຕະຫລາດຫລັກຊັບລາວ:

1. ສະເໜີຮັບຮອງ:

- ການໂອນຊັບສິນ ຂອງລັດວິສາຫະກິດ ໄຟຟ້າລາວ ທີ່ຕິດພັນກັບ 7 ໂຄງການເປົ້າໝາຍ (ເຂື່ອນໄຟຟ້າ) ໃຫ້ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ;
- ການອະນຸມັດເຊັນສັນຍາສຳປະທານ ສະເພາະ 7 ໂຄງການເປົ້າໝາຍ (ເຂື່ອນໄຟຟ້າ);
- ການໃຫ້ສິດນຳໃຊ້ນ້ຳ ແລະ ທີ່ດິນ ໃນຂອບເຂດ 7 ໂຄງການເປົ້າໝາຍ (ເຂື່ອນໄຟຟ້າ);
- ການອະນຸມັດໃຫ້ເສຍຄ່າທຳນຽມ ຈົດທະບຽນເອກະສານ 200.000 ກີບຕໍ່ສະບັບ;
- ການອະນຸມັດໃຫ້ກະຊວງ ການເງິນ ຄ້ຳປະກັນເງິນກູ້ ທີ່ຕິດພັນກັບ 7 ໂຄງການເປົ້າໝາຍ (ເຂື່ອນໄຟຟ້າ).

2. ສະເໜີຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍບາງສະບັບ:

- ມາດຕາ 90 ແລະ 173 ຂອງກົດໝາຍວ່າດ້ວຍວິສາຫະກິດ ກ່ຽວກັບການສົ່ງບົດລາຍງານການສ້າງຕັ້ງບໍລິສັດ ແລະ ເອກະສານທີ່ຈຳເປັນໃຫ້ຜູ້ຖືຮຸ້ນ ຊາບກ່ອນກອງປະຊຸມໃຫ່ຍວິສາມັນຂອງຜູ້ຖືຮຸ້ນ;
- ມາດຕາ 24, 27, 29 ແລະ 37 ຂອງກົດໝາຍວ່າດ້ວຍໄຟຟ້າ ຍ້ອນວ່າ 7 ໂຄງການເປົ້າໝາຍ (ເຂື່ອນໄຟຟ້າ) ໄດ້ຈັດຕັ້ງປະຕິບັດມາດົນແລ້ວ ແລະ ບໍ່ສາມາດທີ່ຈະດຳເນີນຕາມຂັ້ນຕອນ ຂອງກົດໝາຍທີ່ກຳນົດໄວ້;
- ມາດຕາ 28 ຂອງກົດໝາຍວ່າດ້ວຍກຳມະສິດ ຍ້ອນວ່າການສ້າງຕັ້ງບໍລິສັດມະຫາຊົນມີເວລາຈຳກັດ ສະນັ້ນ ຈຶ່ງຂໍຈົດທະບຽນໃນພາຍຫລັງ;
- ມາດຕາ 21, 22, 26 ແລະ 27 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ກ່ຽວກັບການຂໍສຳປະທານ ແລະ ຈົດທະບຽນວິສາຫະກິດ ຍ້ອນວ່າ ໄດ້ຈັດຕັ້ງປະຕິບັດມາດົນແລ້ວ ແລະ ບໍ່ສາມາດທີ່ຈະດຳເນີນຕາມຂັ້ນຕອນ ຂອງກົດໝາຍທີ່ກຳນົດໄວ້ ສະນັ້ນ ສະເໜີຂໍຈົດທະບຽນນຳກະຊວງ ອຸດສາຫະກຳ ແລະ ການຄ້າໂດຍກົງ;
- ມາດຕາ 37 ຂອງກົດໝາຍວ່າດ້ວຍປະກັນໄພ ຍ້ອນວ່າຄວາມສາມາດຂອງບໍລິສັດປະກັນໄພ ຢູ່ ສປປ ລາວ ຍັງບໍ່ທັນສາມາດໃຫ້ປະກັນແກ່ໂຄງການໃຫຍ່ທີ່ມີມູນຄ່າສູງໃນປັດຈຸບັນ.

ລັດຖະບານ ກໍຄື ຄະນະກຳມະການຄຸ້ມຄອງຫລັກຊັບ ແລະຕະຫລາດຫລັກຊັບ ເຫັນເປັນເອກະພາບນຳກັນວ່າ ແມ່ນມີຄວາມຈຳເປັນ ສະເໜີມາຍັງທ່ານເພື່ອ ຂໍການຮັບຮອງແລະ ຍົກເວັ້ນບາງບັນຫາ ໃນການປະຕິບັດ ບາງມາດຕາ ຂອງກົດໝາຍ ບາງສະບັບ ທີ່ຕິດພັນກັບ ວຽກງານຫລັກຊັບ ແລະ ຕະຫລາດ ຫລັກຊັບ ແລະ ຈະບໍ່ມີຜົນກະທົບ ຕໍ່ການປະຕິບັດຄາດໝາຍການເກັບລາຍຮັບ ໃນສົກປີ 2010-2011 ທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາ ໃນເວລາອັນຄວນດ້ວຍ.

ເປັນແທນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ສົມສະຫວາດ ເລັ້ງສະຫວັດ